ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ



ສຳນັກງານໃຫຍ່

ເລກທີ: 1981 /ທຄຕລ.2025
ນະຄອນຫຼວງວຽງຈັນ, ວັນທີ: 01 JUL 2025

# ໜັງສືແຈ້ງເຊີນ

**ເຖິງ** : ບັນດາບໍລິສັດ ຫ້າງຮ້ານຕົວແທນຈຳໜ່າຍເຄື່ອງໄອທີ ໃນນະຄອນຫຼວງວຽງຈັນ.

**ເລື່ອງ:** ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນລາຄາ ລະບົບໜ່ວຍແມ່ຂ່າຍ (Server) ແລະ ອຸປະກອນສຳເນົາຂໍ້ມູນ (OceanProtect).

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍແຈ້ງມາຍັງບັນດາບໍລິສັດ ແລະ ຫ້າງຮ້ານຕົວແທນຈຳໜ່າຍເຄື່ອງໄອທີ ຊາບວ່າ ທຄຕລ ມີຄວາມຕ້ອງການເຄື່ອງໄອທີ ລະບົບໜ່ວຍແມ່ຂ່າຍ (Server) ແລະ ອຸປະກອນສຳເນົາຂໍ້ມູນ (OceanProtect) ເພື່ອມານຳໃຊ້ເຂົ້າໃນວຽກງານວິຊາສະເພາະຂອງ ທະນາຄານ, ຈຶ່ງໄດ້ແຈ້ງເຊີນມາຍັງທ່ານເພື່ອຍື່ນຊອງເຂົ້າຮ່ວມປະມູນລາຄາ ດັ່ງມີລາຍລະອຽດຂ້າງລຸ່ມນີ້:

1. **ລາຍການທີ 1: Server ຈຳນວນ 10 ເຄື່ອງ**

| | |
|---|---|
| Brand | DELL, HPE, Fujitsu, xFusion, Lenovo |
| Quantity | 10 Server |
| Chassis Size | 2U |
| CPU | x2 Socket<br>Intel Xeon Platinum 8462Y+(2.8.0GHz/32-Core/60MB) |
| RAM | x32 DIMM, 64GB DDR5 4800 MHz (Total: 2 TB) |
| PCI | Supports PCIe 4.0 or Upper |
| NIC | Mellanox or Broadcom or Emulex or QLogic.<br>Speed 10Gbps SFP+, x4 port PCIe (x2 Port / Card) with Optical transceiver |
| HBA | Broadcom, Emulex or QLogic 32Gb Fibre Channel Adapter<br>x4 port PCIe (x2 Port / Card) with Optical transceiver |
| FC Cables | x8 Cables (5 meters OM3/OM4 LC-LC) |
| Hard Disk | 960GB or Upper x4 SSD SATA with RAID Card (Support Raid 6) |
| Power Supplies | x2 |
| Power Cable | x2, C13 - C14 (2 meters) |
| OS Support | Huawei VRM, Linux (RedHat 7 or Higher, Ubuntu 20.04 or Higher) |
| Software License | Huawei DCS Platinum Edition (FusionCompute+eDME) |
| Support + MA | 3 years (Hardware and Software) |

| | |
|---|---|
| Post Sale Support | - Can open case via following channels; Web, Chat, Email or Phone<br>- Case(s) can be escalated based on severity level<br>- SLA: 9x5 Next Business Day<br>- Onsite hardware repair or parts exchange by Vendor's Authorized Service Provider |
| Training | 1. Huawei DCS Administration<br>2. 2 Participants |

**2. ລາຍການທີ 2: Huawei OcenProtect X8000 Extension ຈຳນວນ 02 ເຄື່ອງ**

| | |
|---|---|
| Quantity of Enclosure | 1 |
| Drive Type | 7.68TB SSD SAS Disk |
| Quantity of Drive | 13 Drives |
| Software (License) | Backup Storage Capacity License Enhanced Edition(41~300 TB) q-ty 100 |
| | Data Backup Capacity License(Per TiB) q-ty 76 |
| Warranty + MA | 3 Years |

**3. ລາຍການທີ 3: Huawei OcenProtect X8000 Appliances ຈຳນວນ 01 ເຄື່ອງ**

| | |
|---|---|
| Backup Device | Huawei OcenProtect X8000 Appliances |
| Controller | Dual |
| CPU per controller | 64 core @ 2.6GHz |
| RAM per controller | 512GB |
| Quantity of Enclosure | 1 |
| Drive Type NL-SAS | 13 Drives x10TB 7.2K RPM NL-SAS Disk |
| Drive Type SSD-SAS | 6 Drives x1.92TB SSD-SAS Disk |
| Interface | x4 Cards, per Card: 4 ports SmartIO I/O module(SFP+,10Gb ETH) |
| | x2 Cards, per Card: 4-port 10Gb ETH I/O module (supporting IPSec encryption,SFP+,10Gb ETH) |
| Software (License) | Backup Storage Essential Capacity License Enhanced Edition(including 40 TB capacity license)-qty-1 |
| | Backup Storage Capacity License Enhanced Edition(41~300 TB)-qty-90 |
| | Data Backup Capacity License(Per TiB)-qty-82 |
| | HyperEncryption License qty-1 |
| | HyperDetect (anti-Ransomware) License -1 |
| Warranty + MA | 3 Years |

- **ເງື່ອນໄຂຂອງບໍລິສັດ ແລະ ຫ້າງຮ້ານຕົວແທນຈຳໜ່າຍ ທີ່ມີຄວາມຕ້ອງການຍື່ນຊອງປະມູນລາຄາຕ້ອງປະກອບເອກະສານໃຫ້ຄົບຖ້ວນດັ່ງລຸ່ມນີ້:**

- <u>ເອກະສານ ຊອງທີ 1:</u>

1. ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດຳເນີນທຸລະກິດຈຳໜ່າຍເຄື່ອງອຸປະກອນໄອທີ ຢ່າງໜ້ອຍ 03 ປີຂຶ້ນໄປ, ສຳເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນປີ 2023-2025.
2. ເອກະສານລາຍລະອຽດສະເປັກສິນຄ້າ, ການຮັບປະກັນສິນຄ້າ, ໄລຍະເວລາການຈັດສົ່ງສິນຄ້າ ແລະ ຂໍ້ມູນຕ່າງໆ ຕາມ format ທີ່ຕິດຄັດມາພ້ອມນີ້.
3. ເອກະສານຂ້າງເທິງແມ່ນໃຫ້ຍື່ນກ່ອນ ວັນສຸກ **ວັນທີ 11/07/2025 ເວລາ 11:00 ໂມງ** ໂດຍການສົ່ງຟາຍເຂົ້າ E-mail: procurement@bcel.com.la ແລະ inspect-it@bcel.com.la ເພື່ອໃຫ້ສູນໄອທີໄດ້ກວດລາຍລະອຽດ, ຂໍ້ມູນທີ່ຈຳເປັນ ແລະ ສະເປັກ.

- <u>ເອກະສານ ຊອງທີ 2:</u> (ປິດຊອງ)

1. ໃບສະເໜີລາຄາໃຫ້ລະບຸລາຄາຫົວໜ່ວຍແຕ່ລະລາຍການໃຫ້ລະອຽດ, ແລະ ຕ້ອງລວມມູນຄ່າອາກອນທັງໝົດເປັນສະກຸນເງິນກີບໃຫ້ຄົບຖ້ວນ.
2. ຜູ້ສະໜອງຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 10% ຂອງມູນຄ່າທັງໝົດ ໂດຍໜັງສືຄ້ຳປະກັນທີ່ອອກໂດຍທະນາຄານພາຍໃນ **(ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງ ວັນທີ 24/10/2025)** ຫຼື ແຊັກທີ່ວິຊາແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄ້ຳປະກັນດັ່ງກ່າວຄືນພາຍໃນ 10 ວັນ.
3. ໃນ **ວັນອັງຄານ ຕອນເຊົ້າ ວັນທີ 22/07/2025 ເວລາ 09:00 ໂມງ** ແມ່ນມື້ເປີດຊອງປະມູນ ສະນັ້ນ, ໃຫ້ຜູ້ສະໜອງທີ່ຜ່ານການຄັດເລືອກຈາກເອກະສານຊອງທີ 1 ມາຍື່ນຊອງລາຄາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມໃຫຍ່ດອກກຸນ ຊັ້ນ 5 ອາຄານ C.

- <u>ໝາຍເຫດ:</u>

- ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກຳນົດ ຂ້າງເທິງ.

- **ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:**

1. ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຮັບຜິດຊອບຄ່າທຳນຽມໃນການຈົດທະບຽນສັນຍາ.
2. ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ແມ່ນຕ້ອງຮັບຜິດຊອບຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 10% ຂອງມູນຄ່າລວມທີ່ສະເໜີປະມູນ.

- **ການຊຳລະຈະແບ່ງຈ່າຍເປັນ 02 ງວດ ລຸ່ມນີ້:**

  - **ງວດທີ 1:** ຊຳລະ 90% ຂອງມູນຄ່າ ພາຍໃນ 25 ວັນ ລັດຖະການ, ພາຍຫຼັງໄດ້ຮັບເຄື່ອງຄົບຖ້ວນ, ໂອນຖ່າຍຂໍ້ມູນ, ຕິດຕັ້ງສຳເລັດຖືກຕ້ອງ ແລະ ກວດກາຄວາມຖືກຕ້ອງຈາກຄະນະກຳມະການຕິດຕາມກວດກາ.
  - **ງວດທີ 2:** ຊຳລະ 10% ຂອງມູນຄ່າ ພາຍຫຼັງຄົບກຳນົດການຄ້ຳປະກັນຄຸນະພາບສິນຄ້າ 12 ເດືອນ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

**ຜູ້ອຳນວຍການ**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ນ. ສາຍສະໝອນ ຈັນທະຈັກ

## (ຕົວຢ່າງ) ລາຍລະອຽດເອກະສານການປະມູນ (ກະລຸນາຕື່ມຂໍ້ມູນ ແລະ ເຊັນຢັ້ງຢືນ)

- ອີງຕາມໃບແຈ້ງປະມູນ ສະບັບເລກທີ ............/ທຄຕລ, ລົງວັນທີ ......................

| ລ/ດ | ຜູ້ສະໜອງ | ເງື່ອນໄຂ | | | | | | | | | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|
| | | ໃບທະບຽນວິສາຫະກິດ | ໃບຢັ້ງຢືນການເສຍອາກອນ | ໃບອະນຸຍາດດຳເນີນທຸລະກິດ | ໄລຍະເວລາໃນການດຳເນີນທຸລະກິດ | ຜົນງານຜ່ານມາ (Server ທີ່ເຄີຍສະໜອງໃຫ້ພາກສ່ວນໃດແນ່) | ປະເພດ / ວັດສະດຸ / ຍີ່ຫໍ້ສິນຄ້າ | ປະເທດຜະລິດ | ການຮັບປະກັນສິນຄ້າ | ກຳນົດສົ່ງ (ວັນ) | |
| 1 | ບ/ສ......... | (ເລກທີ/ ລົງວັນທີ) | (ເລກທີ/ ລົງວັນທີ) | (ເລກທີ/ ລົງວັນທີ) | .... ປີ | (ໃຫ້ລະບຸ) | | | .... ປີ | ...... | |

ໝາຍເຫດ: ຂໍ້ມູນທີ່ແຈ້ງຂ້າງເທິງນີ້ ເປັນຄວາມຈິງທຸກປະການ, ຖ້າມີຂໍ້ມູນຜິດພາດ ຂ້າພະເຈົ້າຂໍຮັບຜິດຊອບເອງທຸກປະການ.

ນະຄອນຫຼວງວຽງຈັນ, ວັນທີ ......................

ຜູ້ອຳນວຍການບໍລິສັດ

ຜູ້ປະສານງານບໍລິສັດ:
ຊື່:
ໂທ: